ສາທາລະນະລັດປະຊາທິປະໄຕປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

=====000=====

ກະຊວງສາທາລະນະສຸກ

ກອງເລຂາຄະນະກຳມະການປະສານງານ

ກອງທຶນໂລກຕ້ານເອດ, ວັນນະໂຣກ ແລະ ໄຂ້ຍຸງ

ສປປ ລາວ

# ບົດບັນທຶກກອງປະຊຸມ

ກອງປະຊຸມຄະນະກຳມະການປະສານງານກອງທຶນໂລກ (ຄປກທລ) ແມ່ນຈະໄດ້ຈັດຂຶ້ນທຸກໆ 3 ເດືອນເພື່ອປຶກສາຫາລື, ຮັບຟັງການລາຍງານຄວາມຄືບໜ້າຂອງການຈັດຕັ້ງປະຕິບັດເງິນຊ່ວຍເຫຼືອ ໃນຮອບຜ່ານມາ & ຮອບປະຈຸບັນ, ການຮັບຮອງ, ແລະ ການຕັດສິນບັນຫາຕ່າງໆກ່ຽວກັບການຈັດຕັ້ງປະຕິບັດວຽກງານໂຄງການຂອງກອງທຶນໂລກ. ກອງປະຊຸມຄັ້ງນີ້ໂດຍການເປັນປະທານຮ່ວມຂອງ ທ່ານ ດຣ. ສຸລານີ ຈັນສີ ແລະ ດຣ. Juliet FLEISCHL, ຮອງປະທານຄະນະກຳມະການປະສານງານກອງທຶນໂລກ.

I. **ວັນເວລາ:** ວັນພະຫັດ, ທີ 26 ເມສາ 2018, ເວລາ 13:30 ເຖິງ 16:30.

II. **ສະຖານທີ່:** ຫ້ອງປະຊຸມທີ່ຊັ້ນ 3, ກະຊວງສາທາລະນະສຸກ.

III. **ຜູ້ເຂົ້າຮ່ວມ:** ສະມາຊິກສົມບູນ ແລະ ສຳຮອງ ຈຳນວນ 16 ທ່ານ (ມີສິດອອກສຽງໄດ້ 14 ທ່ານ), ພາກສ່ວນອື່ນໆ ຈຳນວນ 12 ທ່ານ, ກອງເລຂາ ຄປກທລ ຈຳນວນ 04 ທ່ານ ລວມທັງໝົດ 32 ທ່ານ.

IV. **ວາລະກອງປະຊຸມ:**

1. ທົບທວນ ແລະ ຮັບຮອງເອົາຮ່າງບົດສະເໜີຂໍທຶນຂອງໂຄງການວັນນະໂຣກໃນກຸ່ມປະຊາກອນເຄື່ອນຍ້າຍໃນອະນຸພາກພື້ນລຸ່ມແມ່ນ້ຳຂອງ;
2. ລາຍງານຜົນຂອງການລົງຕິດຕາມຊຸກຍູ້ການປະຕິບັດວຽກງານຢູ່ແຂວງອັດຕະປື ລະຫວ່າງວັນທີ 26-31 ມີນາ 2018;
3. ສະເໜີຄວາມຄືບໜ້າກ່ຽວກັບການປິດເງິນຊ່ວຍເຫຼືອຂອງຮອບຜ່ານມາ (ລວມທັງ PUDR ແລະ ການປະຕິບັດຂໍ້ແນະນຳຂອງກອງທຶນໂລກຕໍ່ການລາຍງານ) ແລະ ເງິນຊ່ວຍເຫຼືອຮອບໃໝ່;
4. ລາຍການອື່ນໆ ແລະ ການກ່າວປິດກອງປະຊຸມ:
   - ສະເໜີຄວາມຄືບໜ້າໃນການປະຕິບັດທຶນສົມທົບຂອງລັດຖະບານ;
   - ສະເໜີການປະຕິບັດກິດຈະກຳຂອງຄະນະກຳມະການປະສານງານຂອງອົງການຈັດຕັ້ງທາງສັງຄົມ (NPA-CC).

V. **ການສະຫຼຸບສັງລວມໂດຍຫຍໍ້ກ່ຽວກັບເນື້ອໃນທີ່ໄດ້ປຶກສາຫາລື:**

1. **ທົບທວນ ແລະ ຮັບຮອງເອົາຮ່າງບົດສະເໜີຂໍທຶນຂອງໂຄງການວັນນະໂຣກໃນກຸ່ມປະຊາກອນເຄື່ອນຍ້າຍໃນອະນຸພາກພື້ນລຸ່ມແມ່ນ້ຳຂອງ:**

- ກອງປະຊຸມໄດ້ຮັບຟັງບົດນຳສະເໜີໂຄງການ 3 ປີ (ໂຄງການຮ່ວມຂອງຫຼາຍປະເທດ) ກ່ຽວກັບການຄວບຄຸມ ວັນນະໂຣກ ຢູ່ໃນກຸ່ມປະຊາກອນເຄື່ອນຍ້າຍ ມູນຄ່າ 1,214,860ໂດລາ ສຳລັບ ສປປ ລາວ ແລະ ກອງປະຊຸມໄດ້ ເຫັນດີຮັບຮອງເອົາບົດສະເໜີໂຄງການດັ່ງກ່າວນີ້;
- ກອງປະຊຸມໄດ້ສະເໜີໃຫ້ ສູນວັນນະໂຣກ ແລະ ພາກສ່ວນທີ່ກ່ຽວຂ້ອງ ໄປປັບປຸງບາງຈຸດໃນບົດສະເໜີໂຄງການ ເພື່ອເຮັດໃຫ້ບົດສະເໜີໂຄງການມີຄວາມຄົບຖ້ວນ ແລະ ສົມບູນ.

2. ລາຍງານຜົນຂອງການລົງຕິດຕາມຊຸກຍູ້ການປະຕິບັດວຽກງານຢູ່ແຂວງອັດຕະປື ລະຫວ່າງວັນທີ 26-31 ມີນາ 2018:
   - ກອງປະຊຸມໄດ້ຮັບຟັງບົດລາຍງານຜົນຂອງການຕິດຕາມກອດກາທີ່ແຂວງອັດຕະປື ຊຶ່ງມີທັງຂໍ້ສະດວກ, ຂໍ້ຫຍຸ້ງຍາກ, ສິ່ງທ້າທາຍ ແລະ ສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງໄປປຶກສາຫາລື ແລະ ເຮັດແຜນຮ່ວມກັນ ເພື່ອຊອກຫາວິທີທາງ ແລະ ມາດຕະການແກ້ໄຂບັນຫາ ແລະ ສິ່ງທ້າທາຍໃນການຈັດຕັ້ງປະຕິບັດວຽກງານກ່ຽວກັບ 3 ພະຍາດ (ວັນນະໂຣກ ໄຂ້ຍຸງ ແລະ ພະຍາດເອດ) ຢູ່ແຂວງອັດຕາປື.

3. ສະເໜີຄວາມຄືບໜ້າກ່ຽວກັບການປິດເງິນຊ່ວຍເຫຼືອຂອງຮອບຜ່ານມາ (ລວມທັງ PUDR ແລະ ການປະຕິບັດຂໍ້ແນະນຳຂອງກອງທຶນໂລກຕໍ່ການລາຍງານ) ແລະ ເງິນຊ່ວຍເຫຼືອຮອບໃໝ່:
   - ກອງປະຊຸມໄດ້ຮັບຟັງການລາຍງານຄວາມຄືບໜ້າກ່ຽວກັບການກະກຽມປິດເງິນຊ່ວຍເຫຼືອຂອງຮອບຜ່ານມາ ເຊັ່ນ: ການກະກຽມມອບໂອນອຸປະກອນເຄື່ອງຂອງຮັບໃຊ້ໂຄງການ, ການສົ່ງເງິນໂຄງການທີ່ບໍ່ໄດ້ໃຊ້ຄືນໃຫ້ກອງທຶນໂລກ ແລະ ອື່ນໆ;
   - ການປັບປຸງໜ້າວຽກດ້ານການຄຸ້ມຄອງ (Management Actions): ບັນຫາຂອງໜ້າວຽກດ້ານການຄຸ້ມຄອງທີ່ຈະຕ້ອງໄດ້ແກ້ໄຂມີທັງໝົດ 34 ບັນຫາ ແລະ ໄດ້ແກ້ໄຂສຳເລັດແລ້ວ 21 ບັນຫາ, ແລະ ຍັງອີກ 13 ບັນຫາ ທີ່ຍັງສືບຕໍ່ແກ້ໄຂ ຫຼື ແກ້ໄຂໄປບາງສ່ວນແລ້ວ;
   - ບົດລາຍງານການປິດໂຄງການສະບັບສົມບູນ ຈະໄດ້ສົ່ງໃຫ້ກອງທຶນໂລກ ໃນວັນທີ 27 ເມສາ 2018;
   - ສຳລັບເງິນຊ່ວຍເຫຼືອຮອບໃໝ່ປະຈຳທີກເດືອນຕົ້ນປີ 2018 ແມ່ນທາງ PR ໄດ້ຮັບຈາກກອງທຶນໂລກແລ້ວ.

4. ລາຍການອື່ນໆ ແລະ ການກ່າວປິດກອງປະຊຸມ:
   - ສະເໜີຄວາມຄືບໜ້າໃນການປະຕິບັດທຶນສົມທົບຂອງລັດຖະບານ:
     - ທາງແຜນງານແຫ່ງຊາດໄດ້ສຳເລັດການສ້າງແຜນກິດຈະກຳສຳລັບປີ 2018-2020 ຂອງສາມພະຍາດ (ວັນນະໂຣກ ໄຂ້ຍຸງ ແລະ ພະຍາດເອດ) ແລະ ໄດ້ສົ່ງແຜນດັ່ງກ່າວນີ້ ໃຫ້ທາງກະຊວງແຜນການ ແລະ ການລົງທຶນແລ້ວ, ແລະ ປະຈຸບັນນີ້ ແມ່ນຢູ່ໃນຂັ້ນຕອນການພິຈາລະນາ ແລະ ຮັບຮອງເອົາຈາກສະພາ;
     - ທາງແຜນງານແຫ່ງຊາດ ແມ່ນໄດ້ມີການກະກຽມຄວາມພ້ອມ ໃນການສືບຕໍ່ຈັດຕັ້ງປະຕິບັດກິດຈະກຳຂອງສາມພະຍາດໃວ້ແລ້ວ ຖ້າຫາກບໍ່ມີການສະໜັບສະໜູນຈາກພາຍນອກ.

   - ບົດລາຍງານຜົນການສຳຫຼວດກ່ຽວກັບພະຍາດເອດ (2017 IBBS):
     - ທາງສູນຕ້ານເອດ ຍັງບໍ່ໄດ້ຮັບບົດລາຍງານດັ່ງກ່າວນີ້ຈາກຊ່ຽວຊານເທື່ອ, ຊຶ່ງກຳນົດເວລາການສົ່ງບົດລາຍງານຂອງຊ່ຽວຊານ ໄດ້ກາຍກຳນົດເວລາການສົ່ງບົດລາຍງານມາດົນແລ້ວ (ສັນຍາການເຮັດວຽກຂອງຊ່ຽວຊານ ແມ່ນໄດ້ເລີ່ມແຕ່ວັນທີ 15 ພະຈິກ 2017 ຫາ 22 ມັງກອນ 2018). ທາງສູນຕ້ານເອດ ໄດ້ທວງຖາມບົດລາຍງານດັ່ງກ່າວນີ້ນຳຊ່ຽວຊານຕະຫຼອດ ແຕ່ຍັງບໍ່ມີຄວາມຄືບໜ້າເທື່ອ;
     - ກອງປະຊຸມໄດ້ສະເໜີໃຫ້ທາງສູນຕ້ານເອດ, PR ແລະ ພາກສ່ວນທີ່ກ່ຽວຂ້ອງ ປຶກສາຫາລືຮ່ວມ ແລະ ເບິ່ງສັນຍາຄືນ ເພື່ອແກ້ໄຂບັນຫາດັ່ງກ່າວນີ້.

- ສະເໜີການປະຕິບັດກິດຈະກຳຂອງຄະນະກຳມະການປະສານງານຂອງອົງການຈັດຕັ້ງທາງສັງຄົມ (NPA-CC): ຜູ້ຕາງໜ້າຈາກຄະນະກຳມະການປະສານງານສະມາຄົມທີ່ບໍ່ຫວັງຜົນກຳໄລ, ຜູ້ໄດ້ຮັບຜົນກະທົບ ແລະ ຜູ້ຕິດເຊື້ອພະຍາດ (NPA-CC) ໄດ້ລາຍງານຜົນສຳເລັດຂອງການຈັດຕັ້ງປະຕິບັດກິດຈະກຳ (ແຕ່ເດືອນມີນາ 2016 ຫາ ເມສາ 2018) ຂອງຄະນະກຳມະການປະສານງານ.

ກອງປະຊຸມດັ່ງກ່າວນີ້ ໄດ້ສິ້ນສຸດລົງໃນເວລາ 16:30 ຂອງວັນທີ 26 ເມສາ 2018.

ນະຄອນຫຼວງວຽງຈັນ, ວັນທີ 02/05/2018

ປະທານຮ່ວມກອງປະຊຸມ

ທ່ານ ນາງ ດຣ. ສຸລານີ ຈັນສີ

ຜູ້ສັງລວມເນື້ອໃນກອງປະຊຸມ

ທ່ານ ໜູກອນ ທະລັງສີ